# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 6 ຕຸລາ 2024 (10-6-2024)

---

## ຈຸດປະສົງທີ່ເປັນແບບຢ່າງ

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າໄດ້ຮັບສງ່າຣາສີເມື່ອພວກເຮົາດຳເນີນຊີວິດກັບພຣະຄຣິດ-ອົງເປັນສູນກາງຂອງຈຸດປະສົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ມີນັກສິລປິນຢູ່ສອງປະເພດ: 1. ພວກທີ່ແຕ້ມຮູບແລະຫວັງໃຫ້ຄົນອື່ນຊື້. 2. ພວກທີ່ຈ້າງໃຫ້ແຕ້ມຮູບໃຫ້. ບໍ່ມີໃຜຢາກຈ່າຍຄ່າແຕ້ມຮູບຈາກຂ້າພະເຈົ້າ, ແມ່ນແຕ່ການຂາຍເລໜ້າບ້ານ. ແຕ່ວ່າມີຄົນອື່ນທີ່ມີຊື່ສຽງສຳລັບສິລປະຂອງພວກເຂົາ. ຄົນຊອກຫາພວກເຂົາແລະຈ່າຍເງິນໃຫ້ພວກເຂົາເພື່ອແຕ້ມບາງສິ່ງທີ່ສະເພາະເຈາະຈົງ. ໄມໂກແອນເຈໂລ (Michelangelo) ແມ່ນນັກສິລປິນແບບນັ້ນ. ລາວໄດ້ຮັບມອບໝາຍໃນປີ 1508 ເພື່ອທາສີເພດານຂອງໂບດຊິສຕິນ (Sistine). ລາວເຫັນວ່າຕົນເອງເປັນຊ່າງແກະສລັກ, ບໍ່ແມ່ນນັກແຕ້ມຮູບ. ແຕ່ຊື່ສຽງຂອງ ໄມໂກແອນເຈໂລ ແມ່ນເປັນເຊັ່ນນັ້ນ, ເຖິງແມ່ນວ່າລາວບໍ່ເຄີຍແຕ້ມຮູບໃສ່ຝາກຳແພງແມ້ແຕ່ເທື່ອດຽວ, ແຕ່ຄົນອື່ນໝັ້ນໃຈວ່າລາວສາມາດເຮັດໄດ້. ຫ້າຮ້ອຍປີຕໍ່ມາ, ພວກເຮົາຍັງຢູ່ໃນຄວາມປລາດໃຈຂອງສິ່ງທີ່ລາວໄດ້ແຕ້ມ. ພວກເຮົາມີງານມອບໝາຍໃຫ້ເຊັ່ນກັນ, ແລະມັນກ່ຽວຂ້ອງກັບວຽກງານສິລປະ: ພວກເຮົາຕ້ອງປະດັບວຽກງານທີ່ສວຍງາມຂອງພຣະຄຣິດໃຫ້ສະແດງອອກໃນຊີວິດຂອງເຮົາ. ພຣະເຈົ້າໄດ້ເອົາຊີວິດທີ່ເຕັມໄປດ້ວຍຄວາມບາບຂອງພວກເຮົາແລະເຮັດໃຫ້ພວກເຮົາເປັນຜົນງານຊິ້ນເອກຂອງພຣະອົງ. ຄຳມອບໝາຍທີ່ເຮົາໄດ້ຮັບແມ່ນເພື່ອບອກຄົນອື່ນສິ່ງທີ່ພຣະເຈົ້າໄດ້ເຮັດໃນຊີວິດຂອງພວກເຮົາແລະເຊື້ອເຊີນໃຫ້ເຂົາເຈົ້າມີປະສົບການການປ່ຽນແປງດຽວກັນ. ເຮົານຳສງ່າຣາສີມາໃຫ້ພຣະອົງເມື່ອເຮົາດຳເນີນຊີວິດຕາມຈຸດປະສົງນີ້.

*ແມ່ນຫຍັງຄືຜົນງານທີ່ທ່ານໄດ້ສ້າງມາທີ່ໃກ້ທີ່ສຸດກັບຜົນງານຊິ້ນເອກ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ຟີລິບປອຍ 1:1-5

*1. ໂປໂລ ແລະຕີໂມທຽວ ຜູ້ຮັບໃຊ້ຂອງພຣະເຢຊູຄຣິດ ເຖິງພວກໄພ່ພົນຂອງພຣະເຈົ້າໃນພຣະເຢຊູຄຣິດ ທີ່ຢູ່ໃນເມືອງຟີລິບປອຍ*
*ທັງບັນດາຜູ້ດູແລ ແລະຜູ້ບົວລະບັດ. 2. ຂໍໃຫ້ພຣະຄຸນແລະສັນຕິສຸກຈາກພຣະບິດາເຈົ້າຂອງພວກເຮົາ ແລະຈາກພຣະເຢຊູຄຣິດເຈົ້າ*
*ຈົ່ງມີແກ່ເຈົ້າທັງຫຼາຍເຖີ້ນ. 3. ເຮົາລະນຶກເຖິງເຈົ້າທັງຫຼາຍເມື່ອໃດ ກໍໄດ້ຂອບພຣະຄຸນພຣະເຈົ້າຂອງເຮົາທຸກເທື່ອ. 4. ແລະທຸກເວລາ*
*ທີ່ເຮົາອ້ອນວອນຂໍເພື່ອພວກເຈົ້າ ເຮົາກໍທູນຂໍດ້ວຍໃຈຍິນດີ. 5. ເພາະເຫດທີ່ເຈົ້າທັງຫຼາຍໄດ້ມີສ່ວນໃນງານຂ່າວປະເສີດດ້ວຍກັນ ຕັ້ງ*
*ແຕ່ວັນຕົ້ນນັ້ນແລະຕໍ່ມາຈົນເຖິງບັດນີ້.*

ໂປໂລໄດ້ເລີ້ມຈົດໝາຍເຖິງຄຣິສະຕຽນຊາວຟີລິບປອຍດ້ວຍການສະແດງຄວາມຂອບພຣະຄຸນ, ຊົມຊື່ນຍິນດີ, ແລະຄວາມຮັກ, ຄວາມຊົມຊື່ນຍິນດີໄດ້ກ່າວໄວ້ທົ່ວພຣະທັມຟີລິບປອຍ, ແລະມັນເປັນລັກສນະທີ່ເລິກເຊິ່ງກວ່າຄວາມສຸກ. ໂດຍທົ່ວໄປແລ້ວຄວາມສຸກຂອງພວກເຮົາແມ່ນອີງໃສ່ສະຖານະການຂອງພວກເຮົາ. ຄວາມຊົມຊື່ນຍິນດີຍັງຄົງຢູ່ກັບພວກເຮົາໂດຍບໍ່ກ່ຽວກັບສິ່ງທີ່ເຮົາມີຫຼືກຳລັງປະສົບຢູ່. ພວກເຮົາສາມາດມີມື້ທີ່ບໍ່ດີ, ແຕ່ຍັງມີຄວາມຊົມຊື່ນຍິນດີ, ໂປໂລໄດ້ເປັນຕົວຢ່າງຊີວິດທີ່ມີຄວາມຊົມຊື່ນຍິນດີ. ລາວຊົມຊື່ນຍິນດີໃນພຣະຄຣິດເຖິງວ່າຈະມີຄວາມລຳບາກ; ແລະລາວໄດ້ດຳເນີນຊີວິດເພື່ອຮັບໃຊ້ຄົນອື່ນກ່ອນທີ່ຈະຄິດເຖິງຕົວເອງ. ໂປໂລເປັນທຸກຢ່າງກ່ຽວກັບພຣະເຢຊູ, ແລະໃນໃຈຂອງລາວເຕັມໄປດ້ວຍຄວາມຫ່ວງໃຍຕໍ່ຄົນອື່ນ. ໃນແກນແຫ່ງຄວາມຊົມຊື່ນຍິນດີຂອງໂປໂລແມ່ນຄວາມຮັກອັນເລິກເຊິ່ງຕໍ່ພຣະຜູ້ຊ່ອຍໃຫ້ລອດທີ່ໄຫຼອອກມາສູ່ຄວາມຮັກຕໍ່ຜູ້ອື່ນ, ຄວາມຊົມຊື່ນຍິນດີຂອງຄຣິສະຕຽນແມ່ນພຣະ

ຄຣິດເປັນຈຸດໃຈກາງແລະມຸ້ງໄປສູ່ຄວາມອື່ນໆ. ຄວາມຍິນດີຍັງໄດ້ຊຶມຊາບໃນຄຳອະທິຖານຂອງໂປໂລ. ລາວໄດ້ສາລະພາບຢ່າງເປີດເຜີຍວ່າລາວໄດ້ໂມທະນາຂອບພຣະຄຸນຕໍ່ "ພຣະເຈົ້າຂອງຂ້າພະເຈົ້າສຳລັບການລະນຶກເຖິງທ່ານທຸກຢ່າງ" (1:3). ເຖິງແມ່ນວ່າໂບດບໍ່ສົມບູນແບບ, ແຕ່ໂປໂລຍັງມີຄວາມກະຕັນຍູຕໍ່ຜູ້ທີ່ເຊື່ອໃນເມືອງຟີລິບປອຍ. ໂປໂລບໍ່ໄດ້ຂອບພຣະຄຸນພຣະເຈົ້າສຳລັບສິ່ງຕ່າງໆ; ແຕ່ລາວຂອບຄຸນພຣະເຈົ້າສຳລັບປະຊາຊົນ. ໂປໂລສາມາດເຫັນຫຼັກຖານຂອງພຣະຄຸນພຣະເຈົ້າໃນຄົນອື່ນແລະສັນລະເສີນພຣະເຈົ້າສຳລັບວຽກງານຂອງພຣະອົງໃນພວກເຂົາ. ແນ່ນອນໂປໂລມີເຫດຜົນຫຼາຍໆຢ່າງທີ່ຈະຂອບໃຈແລະອະທິຖານດ້ວຍຄວາມຍິນດີ. ຫຼັງຈາກທັງໝົດນີ້, ໃກ້ຕອນທ້າຍຂອງຈົດໝາຍນີ້, ລາວເວົ້າວ່າ, "ຈົ່ງຊົມຊື່ນຍິນດີໃນພຣະຜູ້ເປັນເຈົ້າທຸກເວລາ, ເຮົາຂໍຢໍ້າອີກວ່າ: ຈົ່ງຊົມຊື່ນຍິນດີ!" (4:4). ໂປໂລຈະບໍ່ເອີ້ນເຂົາເຈົ້າໃຫ້ເຮັດສິ່ງທີ່ຕົນເອງບໍ່ໄດ້ເຮັດ (1 ໂກຣິນໂທ 11:1). ໃນຟີລິບປອຍ 1:5, ໂປໂລໄດ້ໃຫ້ເຫດຜົນສະເພາະສຳລັບຄຳອະທິຖານທີ່ເຕັມໄປດ້ວຍຄວາມສຸກຂອງລາວ: *"ເພາະເຫດທີ່ເຈົ້າທັງຫຼາຍໄດ້ມີສ່ວນໃນງານຂ່າວປະເສີດດ້ວຍກັນຕັ້ງແຕ່ວັນຕົ້ນນັ້ນແລະຕໍ່ມາຈົນເຖິງບັດນີ້."* ໂປໂລໄດ້ສະແດງຄວາມກະຕັນຍູຕໍ່ຜູ້ເຊື່ອໃນເມືອງຟີລິບປອຍ, ຜູ້ທີ່ລາວພິຈາລະນາເປັນຄູ່ຮ່ວມງານຂອງລາວໃນຂ່າວປະເສີດ. ຄຣິສຕະຈັກນີ້ໄດ້ສນັບສນູນໂປໂລ ແລະເປັນຜູ້ຮ່ວມງານໃນພາລະກິດຂອງລາວຕັ້ງແຕ່ຕົ້ນເວລາທີ່ລາວຢູ່ເມືອງຟີລິບປອຍ. ຈຸດປະສົງຂອງພຣະເຈົ້າສຳລັບຜູ້ເຊື່ອເຫຼົ່ານີ້ໃນຟີລິບປອຍແມ່ນສະແດງໃຫ້ເຫັນ. ເຂົາເຈົ້າໄດ້ມີຄວາມເຊື່ອໃນພຣະຄຣິດ, ແລະເຂົາເຈົ້າໄດ້ຮັບໃຊ້ພຣະຄຣິດໂດຍການດຳເນີນຊີວິດຕາມຈຸດປະສົງທີ່ພຣະອົງໄດ້ເອີ້ນເຂົາເຈົ້າ: ການຮັບໃຊ້ຄົນອື່ນແລະຮ່ວມມືກັບໂປໂລໃນການເຫັນວ່າຄົນອື່ນຮູ້ຈັກພຣະຄຣິດແລະຂ່າວດີ-ຂ່າວປະເສີດ-ທີ່ພົບເຫັນຢູ່ໃນພຣະຄຣິດ. ທ່ານຢາກເຮັດໃຫ້ຜູ້ໃດຜູ້ນຶ່ງມີຄວາມສຸກບໍ່? ຂ້າພະເຈົ້າໝາຍເຖິງ, ຄວາມສຸກແທ້ໆ? ຄວາມສຸກຊົ່ວນິລັນດອນແລະຊື່ນຊົມຍິນດີ? ຈົ່ງນຳເຂົາເຈົ້າໄປຫາພຣະເຢຊູ. ທ່ານຢາກເຮັດໃຫ້ໂລກນີ້ດີຂຶ້ນບໍ່? ຈົ່ງເຮັດງານສຳລັບຝ່າຍນິລັນດອນ. ເປັນຄູ່ຮ່ວມງານໃນການແບ່ງປັນແລະດຳເນີນຊີວິດຕາມຂ່າວປະເສີດຂອງພຣະຄຣິດ. ນີ້ແມ່ນການລົງທຶນທີ່ພຣະເຈົ້າເອີ້ນພວກເຮົາ, ແລະມັນເປັນນຶ່ງທີ່ພວກເຮົາຈະບໍ່ມີຄວາມເສັຽໃຈ. ໃຫ້ເຮົາຮ່ວມກັບໂປໂລໃນການອະທິຖານດ້ວຍຄວາມຍິນດີຕໍ່ສິ່ງທີ່ພຣະເຈົ້າໄດ້ກະທຳ. ຂອບພຣະຄຸນສຳລັບວິທີທີ່ພຣະຄຣິດໄດ້ຊ່ວຍໃຫ້ທ່ານລອດພົ້ນ, ໄຖ່ທ່ານ, ແລະໃຫ້ຈຸດປະສົງແກ່ທ່ານ. ຈົ່ງດຳເນີນຊີວິດຕາມຈຸດປະສົງນັ້ນເພື່ອວ່າຄົນອື່ນຈະໄດ້ຮັບຄວາມລອດ, ການໄຖ່, ແລະໄດ້ຮັບຈຸດປະສົງໃໝ່ໃນພຣະຄຣິດ.

*ການຈື່ຈຳການກະທຳຂອງພຣະເຈົ້າໃນອາດີດສ້າງຄວາມແຕກຕ່າງໃນຊີວິດຂອງເຮົາທຸກມື້ນີ້ແນວໃດ?*

## 2. ຟີລິບປອຍ 1:6-8

*6. ເຮົາແນ່ໃຈວ່າພຣະອົງຜູ້ຊົງຕັ້ງຕົ້ນການດີໄວ້ໃນພວກເຈົ້າແລ້ວຄົງຈະຊົງກະທຳໃຫ້ສຳເລັດຈົນເຖິງວັນແຫ່ງພຣະເຢຊູຄຣິດ. 7. ການທີ່ເຮົາຄຶດເຖິງເຈົ້າທັງຫຼາຍດັ່ງນັ້ນ ກໍສົມຄວນຢູ່ແລ້ວເພາະວ່າເຮົາມີໃຈຮັກພວກເຈົ້າທຸກຄົນ ເຈົ້າທັງຫຼາຍໄດ້ຮັບສ່ວນຮ່ວມໃນພຣະຄຸນດ້ວຍກັນກັບເຮົາໃນການທີ່ເຮົາຖືກຈຳຈອງແລະໃນການກ່າວປ້ອງກັນໃຫ້ຂ່າວປະເສີດນັ້ນໃຫ້ຕັ້ງໝັ້ນຄົງຢູ່. 8. ເພາະວ່າພຣະເຈົ້າຊົງເປັນພະຍານຝ່າຍເຮົາວ່າ ເຮົາເປັນຫ່ວງເຈົ້າທັງຫຼາຍພຽງໃດຕາມພຣະທັຍເມດຕາຂອງພຣະເຢຊູຄຣິດ.*

ໃນຂໍ້ທີ 6, ໂປໂລໄດ້ໃຫ້ເຫດຜົນອື່ນອີກສຳລັບຄວາມກະຕັນຍູຂອງລາວຕໍ່ພຣະເຈົ້າ: ຄວາມເຊື່ອໝັ້ນໃນລັກສນະແລະຈຸດປະສົງຂອງພຣະເຈົ້າ. ລາວແນ່ໃຈວ່າພຣະເຈົ້າຈະສືບຕໍ່-ແລະເຮັດວຽກງານ-ທີ່ພຣະອົງໄດ້ເລີ້ມຕົ້ນຢູ່ໃນຜູ້ເຊື່ອຊາວຟີລິບປອຍ. ລາວໄດ້ອີງໃສ່ຄວາມຮູ້ຂອງລາວເຣື່ອງພຣະເຈົ້າແລະຄວາມຮັບຮູ້ຂອງລາວໃນຄວາມເຊື່ອຂອງຊາວຟີລິບປອຍ, ພຣະເຈົ້າຈະສຳເລັດສິ່ງທີ່ພຣະອົງເລີ້ມຕົ້ນໃນຊີວິດຂອງປະຊາຊົນຂອງພຣະອົງສເມີ. ເປັນຄຳສັນຍາຍິ່ງໃຫຍ່ທີ່ພວກເຮົາຈະຍຶດໝັ້ນ! ເຮົາອາດປະຖິ້ມວຽກງານທີ່ບໍ່ສຳເລັດ, ແຕ່ພຣະເຈົ້າສຳເລັດໃນສິ່ງທີ່ພຣະອົງເລີ້ມຕົ້ນ. ພຣະເຈົ້າໄດ້ເລີ້ມຕົ້ນວຽກງານນີ້ຢູ່ໃນພວກເຮົາ. ຫຼັງຈາກນັ້ນ, ພຣະເຈົ້າສືບຕໍ່ເຮັດວຽກນີ້ຢູ່ໃນພວກເຮົາ. ແລະພຣະເຈົ້າຈະສຳເລັດວຽກງານນີ້ຢູ່ໃນພວກເຮົາ "ຈົນກ່ວາວັນຂອງພຣະເຢຊູຄຣິດ" (ຂໍ້ 6). ໃນຂໍ້ທີ 7-8, ພວກເຮົາເຫັນຄວາມຮູ້ສຶກທີ່ຍິ່ງໃຫຍ່ແລະຄວາມອົບອຸ່ນທີ່ໂປໂລໄດ້ມີສຳລັບຄຣິສຕະຈັກ. ໂປໂລບໍ່ໄດ້ເປັນໄພ່ພົນທີ່ໂດດດ່ຽວ, ຫຼືເປັນນັກປັນຍາຊົນທຳງາຊ້າງ. ໂປໂລຮັກຜູ້ຄົນຢ່າງເລິກເຊິ່ງ. ບາງຄຣິສະຕຽນ "ທີ່ໃຫຍ່ແລ້ວ" ອາດຈະຄິດວ່າພວກເຂົາເຕີບໂຕເກີນກວ່າການສະ

ແດງຄວາມຮູ້ສຶກ, ແຕ່ບໍ່ແມ່ນໂປໂລ. ຄວາມຮັກອັນເລິກຊຶ້ງຂອງລາວທີ່ມີຕໍ່ພຣະຄຣິດໄດ້ໄຫຼລົງໄປໃນຄວາມຮັກອັນເລິກຊຶ້ງຕໍ່ຜູ້ຄົນທີ່ພຣະເຈົ້າໄດ້ນຳມາສູ່ຊີວິດຂອງລາວ. ແທ້ຈິງແລ້ວ, ໂປໂລໄດ້ປະກາດອອກມາວ່າ, "ພຣະເຈົ້າຊົງເປັນພຍານຝ່າຍເຮົາ" (ຂໍ້ 8), ເພາະວ່າລາວຮູ້ສຶກຢ່າງຈິງແທ້ເຖິງຄວາມຮູ້ສຶກທີ່ເລິກເຊິ່ງແລະຄວາມຮັກຕໍ່ໄພ່ພົນໃນເມືອງຟີລິບປອຍ. ນັ້ນບໍ່ແມ່ນການປະກາດຢ່າງເປົ່າໆ! ມັນເປັນສິ່ງສຳຄັນທີ່ພວກເຮົາຮຽນຮູ້ຫຼັກຄວາມເຊື່ອແລະລະບຽບວິນັຍທີ່ພຣະເຈົ້າໄດ້ເປີດເຜີຍໂດຍຜ່ານຜູ້ຮັບໃຊ້ຂອງພຣະອົງຄືໂປໂລ, ແຕ່ມັນມີຄວາມສຳຄັນເທົ່າທຽມກັນທີ່ພວກເຮົາເຫັນວ່າຄວາມຈິງທີ່ຍິ່ງໃຫຍ່ທີ່ພຣະອົງສອນໄດ້ປາກົດຂຶ້ນໃນຊີວິດຂອງລາວ. ໂປໂລມີຄວາມຮັກເລິກຊຶ້ງຕໍ່ພຣະເຈົ້າແລະຄົນອື່ນໆ. ແນ່ນອນ ລາວຮູ້ສຶກ ແລະສະແດງຄວາມຮັກແພງໃນສິ່ງທີ່ລາວເຊື່ອແລະສອນ. ນັ້ນແມ່ນເຫດຜົນທີ່ໂປໂລເວົ້າໃນຂໍ້ທີ 7 ວ່າລາວຮັບຊາວຟີລິບປອຍໄວ້ໃນຫົວໃຈຂອງລາວ. ຄວາມສັມພັນຂອງຫົວໃຈໄດ້ມີຢູ່ລະຫວ່າງໂປໂລກັບພວກທີ່ເຊື່ອເຫຼົ່ານີ້. ໃນຟີລິບປອຍ 2:17, ໂປໂລໄດ້ກ່າວວ່າລາວໄດ້ຖອກເທຊີວິດຂອງລາວເພື່ອຊາວຟີລິບປອຍ. ໂປໂລແລະຊາວຟີລິບປອຍໄດ້ເປັນແບບຢ່າງໃຫ້ເຮົາຮູ້ວ່າການມີມິດຕະພາບຄຣິສະຕຽນມີຈຸດໃຈກາງທີ່ພຣະເຢຊູ. ໂປໂລເວົ້າວ່າ, “*ການທີ່ເຮົາຄຶດເຖິງເຈົ້າທັງຫຼາຍດັ່ງນັ້ນ ກໍສົມຄວນຢູ່ແລ້ວ*” (1:7). ມັນຖືກຕ້ອງເພາະວ່າຜູ້ເຊື່ອຊາວຟີລິບປອຍໄດ້ *"ຮັບສ່ວນຮ່ວມໃນພຣະຄຸນດ້ວຍກັນກັບເຮົາໃນການທີ່ເຮົາຖືກຈຳຈອງແລະໃນການກ່າວປ້ອງກັນໃຫ້ຂ່າວປະເສີດນັ້ນໃຫ້ຕັ້ງໝັ້ນຄົງຢູ່.*" (ຂໍ້ 7). ການເປັນຄູ່ຮ່ວມງານໃນພຣະຄຸນໝາຍຄວາມວ່າຫຼາຍກ່ວາພຽງແຕ່ໄດ້ຮັບພຣະຄຸນຂອງຄວາມລອດ, ພວກເຂົາຍັງເປັນຄູ່ຮ່ວມງານໃນພຣະຄຸນທີ່ໄດ້ມອບໃຫ້ແກ່ພວກເຂົາໃນຂນະທີ່ພວກເຂົາຮັບໃຊ້ແລະທົນທຸກເພື່ອພຣະຄຣິດ. ໂປໂລດີໃຈເພາະຊາວຟີລິບປອຍສະແດງຄວາມເປັນຫຸ້ນສ່ວນໃນຄວາມສັດຊື່ຕໍ່ໂປໂລແລະວຽກຮັບໃຊ້. ເຂົາເຈົ້າບໍ່ພຽງແຕ່ສນັບສນູນໂປໂລເທົ່ານັ້ນ ໃນຂນະທີ່ເພິ່ນໄດ້ແບ່ງປັນຂ່າວປະເສີດ, ແຕ່ເຂົາເຈົ້າຍັງໄດ້ສນັບສນູນເພິ່ນໃນການອະທິຖານແລະດ້ວຍການສນັບສນູນທາງດ້ານການເງິນໃນລະຫວ່າງການຖືກຈຳຄຸກ. ເຂົາເຈົ້າບໍ່ມີຄວາມອັບອາຍຂອງໂປໂລ, ເຖິງແມ່ນວ່າການຈຳຄຸກໄດ້ນຳເອົາຄວາມອັບອາຍອັນໃຫຍ່ຫຼວງໃນເວລານັ້ນ. ຄວາມຈົງຮັກພັກດີຂອງຊາວຟີລິບປອຍຕໍ່ໂປໂລ-ເຖິງແມ່ນໃນຂນະທີ່ລາວຢູ່ໃນຄຸກກໍເຮັດໃຫ້ຄວາມສັມພັນນີ້ຫວານຊື່ນເປັນພິເສດ. ໃນຂນະທີ່ໂປໂລໄດ້ໄຕ່ຕອງເຖິງຄວາມສັມພັນຂອງລາວກັບຊາວຟີລິບປອຍ, ລາວໄດ້ກ່າວຄຳທີ່ໂດດເດັ່ນວ່າ: *"ເຮົາເປັນຫ່ວງເຈົ້າທັງຫຼາຍພຽງໃດຕາມພຣະທັຍເມດຕາຂອງພຣະເຢຊູຄຣິດ."* (1: 8). ລາວໄດ້ເຕືອນພວກເຂົາເຈົ້າເຖິງຄວາມຮັກຂອງພຣະຄຣິດສຳລັບພວກເຂົາແລະວິທີທີ່ພຣະເຈົ້າເຮັດວຽກຢູ່ໃນລາວເພື່ອຮັກພວກເຂົາໃນແບບດຽວກັນ. ໂປໂລໄດ້ສາມະຄີກັບພຣະຄຣິດ, ແລະຍ້ອນຄວາມສາມະຄີນີ້, ລາວແບ່ງປັນຄວາມຮັກຂອງພຣະຄຣິດສຳລັບຄຣິສຕະຈັກ. ມັນເປັນຄວາມຮັກທີ່ເລິກເຊິ່ງໄປໄກກວ່າຄວາມຮູ້ສຶກ. ຄືກັບທີ່ພຣະເຈົ້າຊົງທຳງານຢູ່ໃນຄຣິສຕະຈັກຟີລິບປອຍ, ພຣະອົງໄດ້ກະທຳການຢູ່ໃນປະຊາຊົນຂອງພຣະອົງໃນບ່ອນທີ່ທ່ານຢູ່. ຈົ່ງຊົມຊື່ນຍິນດີແລະຂອບຄຸນພຣະເຈົ້າສຳລັບສິ່ງທີ່ພຣະອົງກຳລັງກະທຳ; ຈົ່ງສຸກໃຈໃນຄວາມຮັກຂອງພຣະຄຣິດສຳລັບທ່ານແລະທວງຖາມພຣະເຈົ້າປະທານຄວາມຮັກອັນໃໝ່ແກ່ທ່ານສຳລັບປະຊາຊົນຂອງພຣະອົງ. ເມື່ອທ່ານເຫັນພຣະເຈົ້າເຮັດວຽກຢູ່ໃນຊີວິດຂອງຄົນອື່ນ, ແລະເມື່ອທ່ານພິຈາລະນາວິທີທີ່ພຣະອົງເຮັດວຽກຢູ່ໃນຕົວທ່ານ, ທ່ານສາມາດປະສົບຄວາມສຸກແລະຕອບສນອງຕໍ່ພຣະອົງດ້ວຍການສັນລະເສີນ.

## 3. ຟີລິບປອຍ 1:9-11

*9. ແລະເຮົາອ້ອນວອນຂໍໃຫ້ຄວາມຮັກຂອງພວກເຈົ້າຈະເລີນຫຼາຍຂຶ້ນສເມີ ພ້ອມກັບຄວາມຮູ້ແລະຄວາມສັງເກດທຸກຢ່າງ. 10. ເພື່ອເຈົ້າທັງຫຼາຍຈະສັງເກດໄດ້ວ່າສິ່ງໃດປະເສີດທີ່ສຸດແລະເພື່ອພວກເຈົ້າຈະໄດ້ເປັນຄົນບໍຣິສຸດ ແລະບໍ່ມີທີ່ຕິໄດ້ໃນວັນແຫ່ງພຣະເຢຊູຄຣິດ. 11. ຈະໄດ້ເປັນຜູ້ບໍຣິສຸດດ້ວຍຜົນຂອງຄວາມຊອບທັມ ຊຶ່ງເກີດຂຶ້ນດ້ວຍພຣະເຢຊູຄຣິດ ເພື່ອຖວາຍພຣະກຽດແລະຄວາມສັນລະເສີນແກ່ພຣະເຈົ້າ.*

ກ່ອນໜ້ານີ້, ໂປໂລໄດ້ສະແດງຄວາມໝັ້ນໃຈວ່າພຣະເຈົ້າຈະປະຕິບັດວຽກງານຂອງພຣະອົງໃນຊີວິດຂອງພວກເຂົາເຈົ້າ. ບັດນີ້ໂປໂລພິຈາລະນາສິ່ງທີ່ພຣະເຈົ້າຈະເຮັດໃນຂນະທີ່ພຣະອົງດຳເນີນວຽກງານນັ້ນ. ໂປໂລຍັງສືບຕໍ່ອ້ອນວອນຕໍ່ຜູ້ທີ່ເຊື່ອ, ຂໍໃຫ້ພຣະເຈົ້າສືບຕໍ່ຂຍາຍພວກເຂົາດ້ວຍຄວາມຮັກທີ່ມີໃນພຣະຄຣິດ, ຄວາມຮັກທີ່ໃສ່ໃຈພຣະຄຣິດເຕີບໂຕຢູ່ໃນ *“ຄວາມຮູ້ແລະຄວາມສັງເກດທຸກຢ່າງ”*

(ຂໍ້ 9). ເຮົາຕ້ອງດຳເນີນຊີວິດຢ່າງສລາດສຸຂຸມ, ຖືກບອກໃຫ້ຮູ້ຈາກພຣະຄຳ, ແລະເຮົາຕ້ອງດຳເນີນຊີວິດດ້ວຍຄວາມຮັກອັນເລິກຊຶ້ງຕໍ່ພຣະເຈົ້າແລະຄົນອື່ນ. ຄວາມຮູ້ຖາມຄຳຖາມ, "ອັນໃດຖືກຕ້ອງ?" ສະຕິປັນຍາຖາມວ່າ, "ອັນໃດດີທີ່ສຸດ?" ຄວາມຮັກເຮັດໃຫ້ພວກເຮົາດຳເນີນຊີວິດທັງສອງ. ມັນເປັນສິ່ງສຳຄັນທີ່ຄວາມຮັກແລະຄວາມຮູ້ໄປພ້ອມກັນ. ປາສຈາກການຕິດຢູ່ໃນຄວາມຮັກ, ຄວາມຮູ້ສາມາດເຢັນລົງໄດ້. ແຫ້ງໄປ. ໜ້າເບື່ອ. ຫຼາຍໆຄົນເຮົາສາມາດເວົ້າລົມກັນໄດ້ດີແລະມີຫຼັກຄວາມເຊື່ອທີ່ຖືກຕ້ອງ, ແຕ່ບໍ່ມີໃຜຢາກຟັງຖ້າຄວາມຮັກຕໍ່ການຟັງເຫຼົ່ານັ້ນຂາດໄປ. ມັນໂສກເສົ້າສໍ່າໃດທີ່ຈະມີຄວາມຮັກຕໍ່ຄຳສອນທີ່ດີແຕ່ບໍ່ມີຄວາມຮັກອັນແທ້ຈິງຕໍ່ພຣະຄຣິດແລະຄົນອື່ນໆ. ໃນເວລາດຽວກັນ, ຄວາມຮັກຕ້ອງຍຶດໝັ້ນໃນຄວາມຮູ້-ຄວາມຮູ້ທີ່ຖືກຕ້ອງ. ປາສຈາກການຕິດຢູ່ໃນຄວາມຈິງ, ຄວາມຮັກຂອງພວກເຮົາສາມາດເຈີດຈາກນີ້ໄປນັ້ນ, ຄຣິສະຕຽນຫຼາຍຄົນບໍ່ເຄີຍສແວງຫາປັນຍາແລະຄວາມຮູ້. ດ້ວຍເຫດນີ້, ເຂົາເຈົ້າຈຶ່ງເລືອກທາງບໍ່ດີແລະແມ້ກະທັ້ງຕິດຕາມພວກຄູສອນປອມ, ທີ່ລໍ້ລວງຄົນທີ່ຫຼອກງ່າຍ, ດ້ວຍຖືກກະຕຸ້ນ-ທາງອາລົມ.

*ມີອຸປສັກອັນໃດແດ່ທີ່ຈະເຕີບໂຕໃນພຣະຄຣິດ?*

ຂໍ້ຄວາມນີ້ເນັ້ນໜັກເຖິງຄວາມຈຳເປັນຂອງທັງຄວາມຮັກແລະການສັງເກດຮູ້. ຄວາມຮັກບໍ່ແມ່ນເຍືອກເຢັນຫຼືຕາບອດ. ຄວາມຮັກແມ່ນມີທັງຄວາມຮັກແພງຢ່າງເລິກເຊິ່ງແລະມີຄວາມຮູ້ໃນພຣະຄັມພີ. ພວກເຮົາຕ້ອງການຄວາມຮັກ, ຄວາມຮູ້, ແລະການສັງເກດຮູ້ເພື່ອວ່າພວກເຮົາສາມາດເວົ້າຄວາມຈິງໃນຄວາມຮັກຕໍ່ຄົນອື່ນ. ເປັນຫຍັງໂປໂລຈຶ່ງປາຖນາໃຫ້ເຂົາເຈົ້າເຕີບໂຕໃນຄວາມຮັກແບບນີ້? ໂປໂລຕ້ອງການສິ່ງເຫຼົ່ານີ້ສຳລັບຜູ້ທີ່ເຊື່ອໃນຟີລິບປອຍເພື່ອຊື່ສຽງຂອງພຣະເຈົ້າ. ລາວສິ້ນສຸດລົງດ້ວຍເປົ້າໝາຍສູງສຸດຂອງລາວ: *"ເພື່ອຖວາຍພຣະກຽດແລະຄວາມສັນລະເສີນແກ່ພຣະເຈົ້າ."* (1:11). ເຮົາບໍ່ມີຫຍັງສູງກວ່າຈຸດປະສົງໃນຊີວິດທີ່ຈະສັນລະເສີນພຣະເຈົ້າ. ຈົ່ງອະທິຖານເພື່ອໃຫ້ພຣະເຈົ້າໄດ້ຮັບກຽດສັກສີໃນທ່ານ. ໃນປະຊາຊົນຂອງພຣະອົງ, ແລະສຳລັບພຣະເຈົ້າເພື່ອເຮັດໃຫ້ສງ່າຣາສີຂອງພຣະອົງເປັນທີ່ຮູ້ຈັກໂດຍຜ່ານພວກເຮົາຕໍ່ປະຊາຊາດທຸກໆປະເທດ.

## ນຳໃຊ້ໃນຊີວິດ

ພຣະເຈົ້າໄດ້ຮັບສງ່າຣາສີໃນເມື່ອພວກເຮົາດຳເນີນຊີວິດດ້ວຍຈຸດປະສົງຂອງພຣະຄຣິດ. ທ່ານຈະດຳເນີນຊີວິດຢ່າງມີຈຸດປະສົງແລະສັນລະເສີນພຣະເຈົ້າແນວໃດ? ເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ໄປນີ້:

• **ປູກຝັງຊີວິດທີ່ຮູ້ພຣະຄຸນ**. ຖ້າທ່ານເປັນຄຣິສະຕຽນ, ຈົ່ງຮູ້ວ່າທ່ານໄດ້ຮັບພອນຫຼາຍກວ່າທີ່ທ່ານສົມຄວນໄດ້ຮັບ. ໂດຍບໍ່ຄຳນຶງເຖິງສະຖານະການຂອງທ່ານ, ຈົ່ງເຕືອນຕົວເອງທຸກວັນກ່ຽວກັບທຸກສິ່ງທີ່ເປັນຂອງທ່ານໃນພຣະເຢຊູຄຣິດ. ເມື່ອທ່ານອະທິຖານແລະຂອບຄຸນພຣະເຈົ້າສຳລັບທຸກສິ່ງທີ່ພຣະອົງໄດ້ເຮັດເພື່ອທ່ານ, ຂໍໃຫ້ຄວາມຍິນດີຂອງພຣະອົງເຕັມໄປທົ່ວຫົວໃຈຂອງທ່ານແລະຖືກເຫັນວ່າທ່ານຮັບໃຊ້ຄົນອື່ນ.

• **ຈື່ຈຳຟີລິບປອຍ 1:6**. ຈົ່ງຈື່ຈຳພຣະຄັມຂໍ້ນີ້ເພື່ອເປັນການເຕືອນວ່າພຣະເຈົ້າກຳລັງເຮັດວຽກ, ເຖິງແມ່ນວ່າເມື່ອເຮົາຍັງບໍ່ທັນເຫັນຜົນໄດ້ຮັບ: *"ເຮົາແນ່ໃຈວ່າພຣະອົງຜູ້ຊົງຕັ້ງຕົ້ນການດີໄວ້ໃນພວກເຈົ້າແລ້ວຄົງຈະຊົງກະທຳໃຫ້ສຳເລັດຈົນເຖິງວັນແຫ່ງພຣະຄຣິດເຈົ້າເຢຊູ."*

• **ເປັນຄູ່ຮ່ວມງານກັບຄົນອື່ນໃນຂ່າວປະເສີດ**. ລົງທຶນຊີວິດຂອງທ່ານໃນການສນັບສນູນຄົນອື່ນດ້ວຍວຽກຮັບໃຊ້ຂອງເຂົາເຈົ້າ. ການຮ່ວມມືດັ່ງກ່າວຄວນປະກອບມີການອະທິຖານ, ແລະມັນອາດຈະລວມເຖິງການສນັບສນູນທາງດ້ານການເງິນ, ຫຼືການຊ່ວຍເຫຼືອພວກເຂົາດ້ວຍຕົນເອງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**